ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟັກ (856-21) 213109, 213110

ກອງປະຊຸມສະຫຼຸບຜົນການມາເຮັດວຽກຂອງ ຄະນະປະເມີນເສດຖະກິດມະຫາພາກຂອງ ສປປ ລາວ

ໃນຕອນບ່າຍຂອງວັນທີ 30 ກັນຍາ 2026, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມສະຫຼຸບຜົນການມາເຮັດວຽກຕິດຕາມເສດຖະກິດມະຫາພາກ ຂອງ ສປປ ລາວ ໃນຮູບແບບ Staff Visit ປະຈຳປີ 2026 ໂດຍການໃຫ້ກຽດເປັນປະທານຮ່ວມຂອງ ທ່ານ ອາລຸນ ບຸນຍິງ, ຮອງຜູ້ວ່າການ ທຫລ ແລະ ທ່ານ ປອ. ສິດທິຣິດ ຣາຊະພົນ, ຮອງລັດຖະມົນຕີກະຊວງການເງິນ; ມີບັນດາຄະນະປະເມີນຂອງ IMF, ພ້ອມດ້ວຍພະນັກງານຫຼັກແຫຼ່ງ ຈາກກົມທີ່ກ່ຽວຂ້ອງ ຂອງທັງສອງຂະແໜງການ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໃນຄັ້ງນີ້ ເພື່ອສະຫຼຸບ ແລະ ຮັບຟັງການລາຍງານຜົນການປະເມີນເບື້ອງຕົ້ນ ຈາກທີມງານຂອງ IMF. ພ້ອມນີ້, ທີ່ປະຊຸມ ໄດ້ມີການປຶກສາຫາລືແລກປ່ຽນທັດສະນະ, ຄຳແນະນຳດ້ານນະໂຍບາຍ ແລະ ການກະກຽມເຮັດວຽກຮ່ວມກັນໃນຕໍ່ໜ້າ ໂດຍສະເພາະແມ່ນການກະກຽມຂໍ້ມູນ ສຳລັບການປະເມີນເສດຖະກິດມະຫາພາກ ຕາມມາດຕາ IV (Article IV Consultation) ປະຈຳປີ 2027.

ກອງປະຊຸມດັ່ງກ່າວ ໄດ້ດຳເນີນເປັນເວລາເຄິ່ງວັນ ດ້ວຍບັນຍາກາດຝຶດຟື້ນ ຊຶ່ງຜູ້ເຂົ້າຮ່ວມໄດ້ແລກປ່ຽນ ຄຳຄິດເຫັນຢ່າງກົງໄປກົງມາ ແລະ ສຳເລັດລົງຕາມຈຸດປະສົງ-ລະດັບຄາດໝາຍທີ່ວາງໄວ້.

ຂ່າວ: ກົມຮ່ວມມືສາກົນ

ພາບ: ຫ້ອງການ ທຫລ